ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----------===== 000 =====----------

ຄະນະກຳມະການຄຸ້ມຄອງ
ຫຼັກຊັບ ແລະຕະຫຼາດຫຼັກຊັບ

ເລກທີ 013 /ຄລຕ
ນະຄອນຫຼວງວຽງຈັນ, ວັນທີ 10 NOV 2010

## ຂໍ້ຕົກລົງວ່າດ້ວຍ ລະບຽບ ການບັນຊີ ແລະ ການກວດສອບກ່ຽວກັບວຽກງານຫຼັກຊັບ

- ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 01/ສພຊ ລົງວັນທີ 02 ກໍລະກົດ 2007.
- ອີງຕາມກົດໝາຍວ່າດ້ວຍການກວດສອບ ສະບັບເລກທີ 05/ສພຊ ລົງວັນທີ 03 ກໍລະກົດ 2007.
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.
- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010.

**ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ຜັນຂະຫຍາຍມາດຕາ 15, 38, 54 ແລະ 63 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010 ຊຶ່ງກຳນົດຫຼັກການ ແລະ ມາດຕະການເພີ່ມເຕີມກ່ຽວກັບການບັນຊີ ແລະ ການກວດສອບທີ່ຕິດພັນກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ສ້າງຄວາມໝັ້ນໃຈໃຫ້ນັກລົງທຶນ ຕໍ່ຂໍ້ມູນຂ່າວສານການເງິນທີ່ສະແດງອອກໃນເອກະສານລາຍງານການເງິນ, ມີຄວາມໂປ່ງໃສບັນລຸຄຸນນະພາບທີ່ເປັນໜ້າເຊື່ອຖື; ແລະ ຜ່ານການກວດສອບຖືກຕ້ອງທີ່ສຸດຕາມມາດຕະຖານ ໂດຍຜູ້ກວດສອບທີ່ມີຄຸນວຸດທິ ແລະ ປະຕິບັດຕາມມາດຕະຖານການກວດສອບ.

**ມາດຕາ 2. ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຕໍ່ພາກສ່ວນ ດັ່ງລຸ່ມນີ້:

1. ບໍລິສັດ ທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ, ຜູ້ກວດສອບ ທີ່ໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ຕໍ່ບໍລິສັດທີ່ດໍາເນີນການເຄື່ອນໄຫວວຽກງານຫຼັກຊັບ;
2. ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
3. ພະນັກງານຂອງສໍານັກງານ ຄລຕ, ບຸກຄົນ ແລະ ນິຕິບຸກຄົນ ທີ່ພົວພັນ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **"ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ" ໝາຍເຖິງ** ບໍລິສັດທີ່ໃຫ້ການບໍລິການດ້ານການບັນຊີ ຊຶ່ງສ້າງຕັ້ງຂຶ້ນຕາມກົດໝາຍວ່າດ້ວຍການບັນຊີ ແລະ ທີ່ໄດ້ຈົດທະບຽນໃນບັນຊີລາຍຊື່ຜູ້ກວດສອບທີ່ໄດ້ຮັບອະນຸຍາດຈາກສະມາຄົມວິຊາຊີບນັກບັນຊີ ແລະ ຜູ້ກວດສອບອິດສະລະລາວ;
2. **"ບໍລິສັດກວດສອບ" ໝາຍເຖິງ** ຫົວໜ່ວຍກວດສອບອິດສະລະ ທີ່ໄດ້ກໍານົດໄວ້ໃນມາດຕາ 58 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ແມ່ນບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ ແລະ ກວດສອບທີ່ໄດ້ຈົດທະບຽນໃນບັນຊີລາຍຊື່ຜູ້ກວດສອບທີ່ໄດ້ຮັບອະນຸຍາດຈາກສະມາຄົມ ວິຊາຊີບນັກບັນຊີ ແລະ ຜູ້ກວດສອບອິດສະລະລາວ;
3. **"ການບັນຊີ" ໝາຍເຖິງ** ການຮັບຮູ້, ຄິດໄລ່, ບັນທຶກ, ຈັດວາງ ແລະ ການລາຍງານຂໍ້ມູນດ້ານການເງິນ ທີ່ເນື່ອງມາຈາກການເຄື່ອນໄຫວກິດຈະການຂອງຫົວໜ່ວຍການບັນຊີ;
4. **"ການກວດສອບ" ໝາຍເຖິງ** ການທົບທວນ ແລະ ກວດກາຢືນຢັນ ຫຼື ການດໍາເນີນງານຂອງບໍລິສັດເພື່ອປະເມີນວ່າ ບໍລິສັດໄດ້ປະຕິບັດຕາມມາດຕະຖານການບັນຊີລາວ; ແລະ ລະບຽບການຕ່າງໆທີ່ພົວພັນ. ການບໍລິການການກວດສອບລວມມີ ການກວດສອບເອກະສານລາຍງານການເງິນ, ການກວດສອບປະສິດທິພາບການດໍາເນີນງານ, ການກວດສອບຄວາມສອດຄ່ອງຕາມລະບຽບກົດໝາຍ;
5. **"ເອກະສານລາຍງານການເງິນ" ໝາຍເຖິງ** ເອກະສານຕ່າງໆ ທີ່ໄດ້ກໍານົດໄວ້ໃນມາດຕາ 36.2 ຂອງກົດໝາຍວ່າດ້ວຍການບັນຊີ;
6. **"ກຸ່ມເປົ້າໝາຍ" ໝາຍເຖິງ** ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

## ໝວດທີ II
## ການບັນຊີ

**ມາດຕາ 4. ການປະຕິບັດການບັນຊີ**

ກຸ່ມເປົ້າໝາຍ ຕ້ອງປະຕິບັດລະບຽບພື້ນຖານການບັນຊີ, ມາດຕະຖານບັນຊີ, ມີເອກະສານຢັ້ງຢືນ, ປຶ້ມຄູ່ມື, ປຶ້ມບັນຊີ, ປຶ້ມຕິດຕາມ ແລະ ເກັບຮັກສາເອກະສານການບັນຊີ ຕາມ

ທີ່ໄດ້ກຳນົດໄວ້ໃນ ພາກທີ II ໝວດທີ 2, 3, 4, 5 ແລະ 8 ຂອງກົດໝາຍວ່າດ້ວຍການບັນຊີ.

ກຸ່ມເປົ້າໝາຍ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ການບັນຊີ ແລະ ລະບຽບການຕ່າງໆດ້ານບັນຊີ ສະບັບທີ່ ມີຜົນບັງຄັບໃຊ້.

ກຸ່ມເປົ້າໝາຍ ຕ້ອງແຕ່ງຕັ້ງ ຫົວໜ້າບັນຊີ ແລະ ນາຍບັນຊີຈຳນວນໜຶ່ງ ເພື່ອຈັດຕັ້ງປະຕິບັດ ແລະ ຄຸ້ມຄອງລະບົບການບັນຊີຂອງຕົນ.

**ມາດຕາ 5. ການຄວບຄຸມພາຍໃນ**

ກຸ່ມເປົ້າໝາຍ ຕ້ອງປະຕິບັດການຄວບຄຸມພາຍໃນການບັນຊີ ຕາມທີ່ໄດ້ລະບຸໄວ້ໃນ ພາກທີ II ໝວດທີ 6 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ສ້າງປື້ມຄູ່ມືກ່ຽວກັບລະບົບການຄວບຄຸມພາຍໃນການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ພາກທີ II ໝວດທີ 5 ມາດຕາ ທີ 27 ຂອງກົດໝາຍວ່າດ້ວຍການບັນຊີ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ວິທີການຈຳແນກ, ການຈັດປະເພດ, ການບັນທຶກ ແລະ ການລາຍງານຂໍ້ມູນທາງບັນຊີ;
2. ວິທີການຄວບຄຸມຂໍ້ຜິດພາດ ຂອງຂໍ້ມູນທາງບັນຊີ ແລະ ວິທີແກ້ໄຂ;
3. ການກວດສອບພາຍໃນ ເຊັ່ນ: ການກວດກາ ແລະ ການປັບປຸງແກ້ໄຂຂໍ້ມູນທາງບັນຊີ;
4. ວິທີການຄຸ້ມຄອງປື້ມບັນຊີ ແລະ ການເກັບຮັກສາຂໍ້ມູນທາງບັນຊີ ລວມທັງຂັ້ນຕອນການຄວບຄຸມເພື່ອປ້ອງກັນການປອມແປງ, ການແກ້ໄຂ, ຄວາມເສຍຫາຍ ແລະ ການທຳລາຍຂໍ້ມູນ;
5. ຄວາມຮັບຜິດຊອບຂອງພະນັກງານກ່ຽວຂ້ອງກັບການກະກຽມ ແລະ ແຈ້ງຂໍ້ມູນທາງບັນຊີໃຫ້ມວນຊົນຮັບຮູ້;
6. ຂໍ້ມູນອື່ນໆ ທີ່ຈຳເປັນສຳລັບການກະກຽມຂໍ້ມູນທາງບັນຊີທີ່ເຊື່ອຖືໄດ້ ແລະ ແຈ້ງໃຫ້ມວນຊົນຮັບຮູ້.

**ມາດຕາ 6. ເອກະສານລາຍງານການເງິນ**

ກຸ່ມເປົ້າໝາຍ ຕ້ອງສ້າງເອກະສານລາຍງານການເງິນ ໃຫ້ສຳເລັດຕາມ ກຳນົດເວລາທີ່ໄດ້ກຳນົດໄວ້ ໃນມາດຕາ 37 ຂອງກົດໝາຍວ່າດ້ວຍການບັນຊີ (2 ເດືອນ ຫຼັງຈາກມື້ປິດບັນຊີປະຈຳປີ) ແລະ ສົ່ງໃຫ້ຜູ້ກວດສອບ 45 ວັນ ກ່ອນກອງປະຊຸມສາມັນປະຈຳປີຂອງຜູ້ຖືຮຸ້ນ.

**ມາດຕາ 7. ມາດຕະຖານບັນຊີ**

ກຸ່ມເປົ້າໝາຍ ຕ້ອງຈັດຕັ້ງປະຕິບັດ ແລະ ນຳໃຊ້ມາດຕະຖານບັນຊີວິສາຫະກິດໂດຍຖືກຕ້ອງຕາມລະບຽບການດ້ານບັນຊີ.

**ມາດຕາ 8. ການເກັບຮັກສາເອກະສານການບັນຊີ**

ກຸ່ມເປົ້າໝາຍ ຕ້ອງເກັບຮັກສາເອກະສານການບັນຊີ ຕາມທີ່ໄດ້ລະບຸໄວ້ໃນ ພາກທີ II ໝວດທີ 8 ຂອງກົດໝາຍວ່າດ້ວຍການບັນຊີ. ຜູ້ຖືຮຸ້ນ ຫຼື ເຈົ້າໜີ້ຂອງກຸ່ມເປົ້າໝາຍປະເພດ ບໍລິສັດອອກຫຼັກຊັບ ສາມາດສະເໜີຂໍກວດກາເອກະສານການບັນຊີທີ່ຖືກເກັບຮັກສາ ແລະ ຂໍສຳເນົາເອກະສານດັ່ງກ່າວ ໃນເວລາລັດຖະການ.

**ມາດຕາ 9. ການບໍລິການດ້ານທີ່ປຶກສາບັນຊີ**

ການບໍລິການດ້ານທີ່ປຶກສາບັນຊີ ປະກອບດ້ວຍ:

1. ການສ້າງບົດລາຍງານການເງິນ;
2. ການອອກແບບ ແລະ ການປະຕິບັດງານຂອງລະບົບຂໍ້ມູນທາງການເງິນ;
3. ການປະເມີນ-ຕີມູນຄ່າ ຊັບສິນ, ໜີ້ສິນ ແລະ ທຶນ;
4. ການບໍລິການກ່ຽວກັບການຄຳນວນຄ່າສະເພາະທາງສະຖິຕິ;
5. ການກວດກາພາຍໃນ;
6. ການບໍລິການອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

## ໝວດທີ III
## ການກວດສອບ

**ມາດຕາ 10. ການດຳເນີນການກວດສອບ**

ນອກຈາກ ທີ່ໄດ້ກຳນົດໄວ້ໃນ ມາດຕາ 63 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ກຸ່ມເປົ້າໝາຍຕ້ອງດຳເນີນການກວດສອບ ຕາມຂົງເຂດການກວດສອບ ທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍການກວດສອບ. ສຳລັບບໍລິສັດອອກຫຼັກຊັບ ຕ້ອງໄດ້ຮັບການທົບທວນ ແລະ ການປະກອບຄຳເຫັນຈາກຜູ້ກວດສອບ ກ່ຽວກັບເອກະສານລາຍງານການເງິນປະຈຳທຸກ (6) ເດືອນຕົ້ນປີການບັນຊີ.

ການດຳເນີນການກວດສອບຂອງກຸ່ມເປົ້າໝາຍ ຕ້ອງຈັດຕັ້ງປະຕິບັດຕາມ ມາດຕາ 35 ຂອງກົດໝາຍວ່າດ້ວຍການກວດສອບ.

**ມາດຕາ 11. ການຄັດເລືອກ ແລະ ການແຕ່ງຕັ້ງບໍລິສັດກວດສອບ**

1. ກຸ່ມເປົ້າໝາຍ ຕ້ອງຄັດເລືອກ ແລະ ແຕ່ງຕັ້ງບໍລິສັດກວດສອບ ຈາກບັນຊີລາຍຊື່ບໍລິສັດກວດສອບທີ່ຖືກຮັບຮອງໂດຍສຳນັກງານ ຄລຕ ໃຫ້ສຳເລັດ ພາຍໃນສາມ (3) ເດືອນກ່ອນວັນເລີ່ມຕົ້ນຈັດຕັ້ງປະຕິບັດການທົບທວນ ຫຼື ການກວດສອບ ພ້ອມທັງລາຍງານການຄັດເລືອກດັ່ງກ່າວ ໃຫ້ສຳນັກງານ ຄລຕ;
2. ບໍລິສັດກວດສອບທີ່ຖືກແຕ່ງຕັ້ງ ສາມາດດຳເນີນການກວດສອບກຸ່ມເປົ້າ ໝາຍໃດໜຶ່ງຕິດຕໍ່ກັນສູງສຸດບໍ່ເກີນຫ້າ (5) ປີ;

3. ກຸ່ມເປົ້າໝາຍ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ກ່ຽວກັບການແຕ່ງຕັ້ງ ຫຼື ປ່ຽນແປງ ບໍລິສັດກວດສອບ ໃຫ້ສຳນັກງານ ຄລຕ ພາຍໃນສອງ (2) ວັນລັດຖະການ ແລະຕ້ອງ ແຈ້ງໃຫ້ບັນດາຂາຮຸ້ນຮັບຊາບ.

**ມາດຕາ 12. ການຍົກເລີກບໍລິສັດກວດສອບ**

ກຸ່ມເປົ້າໝາຍ ສາມາດຍົກເລີກ ສັນຍາການກວດສອບ ຖ້າເກີດກໍລະນີ ດັ່ງນີ້:

1. ຜູ້ກວດສອບມີການລະເມີດ, ລົ້ມເຫຼວໃນການປະຕິບັດໜ້າທີ່ໃນເວລາດຳເນີນການກວດ ສອບ;
2. ຜູ້ກວດສອບຖືກຕັດອອກຈາກບັນຊີລາຍຊື່ທີ່ຖືກຮັບຮອງຂອງສຳນັກງານ ຄລຕ;
3. ກໍລະນີອື່ນໆ ທີ່ສຳນັກງານ ຄລຕ ເຫັນວ່າມີການລະເມີດ.

ກຸ່ມເປົ້າໝາຍ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ກ່ຽວກັບການຍົກເລີກບໍລິສັດກວດ ສອບ ໃຫ້ສຳນັກງານ ຄລຕ ພາຍໃນສອງ (2) ວັນລັດຖະການ ແລະ ຕ້ອງແຈ້ງໃຫ້ບັນດາຂາ ຮຸ້ນຮັບຊາບ.

**ມາດຕາ 13. ການສະເໜີບໍລິສັດກວດສອບ ໂດຍສຳນັກງານ ຄລຕ**

ສຳນັກງານ ຄລຕ ມີສິດສະເໜີບໍລິສັດກວດສອບ ຕໍ່ບໍລິສັດອອກຫຼັກຊັບ ຫາກເກີດ ກໍລະນີ ດັ່ງນີ້:

1. ບໍລິສັດອອກຫຼັກຊັບ ບໍ່ສາມາດແຕ່ງຕັ້ງບໍລິສັດກວດສອບໄດ້ ພາຍໃນໄລຍະເວລາທີ່ກຳນົດ ໄວ້ ໃນ ຂໍ້ 1 ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
2. ບໍລິສັດອອກຫຼັກຊັບ ປ່ຽນບໍລິສັດກວດສອບ ໂດຍບໍ່ສາມາດສະແດງເຫດຜົນ ຫຼື ລະເມີດ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
3. ບໍລິສັດອອກຫຼັກຊັບ ທີ່ຖືກປະກາດໂດຍສຳນັກງານ ຄລຕ ວ່າເປັນບໍລິສັດທີ່ ລະເມີດມາດ ຕະຖານການບັນຊີ ຫຼື ບໍລິສັດທີ່ຕ້ອງມີການກວດສອບຄືນໃຫ້ຖືກຕ້ອງຕາມມາດຕະຖານ.

**ມາດຕາ 14. ບົດລາຍງານການກວດສອບ**

ນອກຈາກ ທີ່ໄດ້ກຳນົດໄວ້ໃນ ມາດຕາ 36 ຂອງກົດໝາຍວ່າດ້ວຍການກວດສອບ ຜູ້ກວດສອບ ແລະ ກຸ່ມເປົ້າໝາຍ ຕ້ອງສ້າງ ແລະ ລາຍງານດັ່ງນີ້:

1. ຜູ້ກວດສອບ ຕ້ອງສ້າງບົດລາຍງານການກວດສອບ ເພື່ອສະແດງຄຳເຫັນຕໍ່ເອກະສານ ລາຍງານການເງິນທີ່ໄດ້ຜ່ານການກວດສອບ;
2. ບົດລາຍງານການກວດສອບ ຕ້ອງມີເນື້ອໃນກ່ຽວກັບຂອບເຂດການກວດສອບ, ຄຳເຫັນ ຂອງຜູ້ກວດສອບ ແລະ ຂໍ້ມູນທີ່ເປັນປະໂຫຍດສຳລັບການຕັດສິນໃຈທີ່ເໝາະສົມ ຂອງຜູ້ ນຳໃຊ້ບົດລາຍງານ;
3. ຜູ້ກວດສອບ ຕ້ອງສົ່ງບົດລາຍງານການກວດສອບໃຫ້ກັບກຸ່ມເປົ້າໝາຍ ພາຍໃນ ສິບສີ່ວັນ (14 ວັນ) ກ່ອນກອງປະຊຸມສາມັນປະຈຳປີຜູ້ຖືຮຸ້ນ;

4. ກຸ່ມເປົ້າໝາຍ ຕ້ອງສົ່ງເອກະສານລາຍງານການເງິນທີ່ຜ່ານການກວດສອບ ແລະ ຖືກຮັບຮອງໂດຍກອງປະຊຸມສາມັນປະຈຳປີຜູ້ຖືຮຸ້ນ ໃຫ້ສຳນັກງານ ຄລຕ ພາຍໃນ ສິບສີ່ວັນ (14 ວັນ) ຫຼັງຈາກກອງປະຊຸມ.
5. ກໍລະນີບົດລາຍງານການກວດສອບເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ.

**ມາດຕາ 15. ການລາຍງານກ່ຽວກັບການກະທຳທີ່ບໍ່ຖືກຕ້ອງ**

ໃນການປະຕິບັດໜ້າທີ່ຂອງຕົນ ຜູ້ກວດສອບຫາກພົບເຫັນ ການລະເມີດຕໍ່ລະບຽບກົດໝາຍທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງບໍລິສັດທີ່ຖືກກວດສອບ ແລະ ກ່ຽວຂ້ອງກັບການດຳເນີນທຸລະກິດຂອງບໍລິສັດດັ່ງກ່າວ ຜູ້ກວດສອບຕ້ອງແຈ້ງໃຫ້ໜ່ວຍງານກວດກາພາຍໃນ, ຄະນະກຳມະການກວດສອບ ແລະ ລາຍງານໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ສຳນັກງານ ຄລຕ.

**ມາດຕາ 16. ການຮັກສາຄວາມລັບ**

ບຸກຄົນດັ່ງຕໍ່ໄປນີ້ ຕ້ອງຮັກສາຄວາມລັບທີ່ຕິດພັນກັບການກວດສອບ ທີ່ຕົນໄດ້ຮັບຮູ້ໃນການປະຕິບັດໜ້າທີ່:

1. ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ຜູ້ກວດສອບ, ຜູ້ຊ່ວຍຜູ້ກວດສອບ ແລະ ບໍລິສັດກວດສອບທີ່ພວກກ່ຽວສັງກັດ;
2. ພະນັກງານຂອງສຳນັກງານ ຄລຕ.

ໃນເວລາທີ່ປະຕິບັດໜ້າທີ່ສຳເລັດແລ້ວ ຜູ້ກວດສອບທຸກຄົນ ຕ້ອງຮັກສາຄວາມລັບ ໃນບັນຫາທີ່ຕົນໄດ້ຮູ້, ໄດ້ເຫັນກ່ຽວກັບເອກະສານ, ຂໍ້ມູນຕ່າງໆຂອງກຸ່ມເປົ້າໝາຍ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກກຸ່ມເປົ້າໝາຍ (ສະພາບໍລິຫານ) ຫຼື ຄຳສັ່ງຂອງສານເທົ່ານັ້ນ.

## ໝວດທີ IV
## ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງໂດຍ ສຳນັກງານ ຄລຕ

**ມາດຕາ 17. ເງື່ອນໄຂການຮັບຮອງບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ ແລະ ບໍລິສັດກວດສອບ**

ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ ແລະ ບໍລິສັດກວດສອບ ທີ່ຖືກຮັບຮອງ ໂດຍສຳນັກງານ ຄລຕ ຕ້ອງມີເງື່ອນໄຂດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນທຸລະກິດ ໃນ ສປປ ລາວ ຢ່າງໜ້ອຍສາມ (3) ປີ ກ່ອນມື້ຍື່ນໃບສະໝັກຕໍ່ສຳນັກງານ ຄລຕ; ກໍລະນີ ບໍລິສັດກວດສອບຄວບກັບບໍລິສັດອື່ນ ການຄວບ ດັ່ງກ່າວຕ້ອງມີອາຍຸຫຼາຍກວ່າຫົກ (6) ເດືອນ;
2. ມີທຶນຈົດທະບຽນຕ່ຳສຸດໜຶ່ງ (1) ຕື້ກີບ;
3. ມີຜູ້ກວດສອບ ບໍ່ຕ່ຳກວ່າຫ້າ (5) ຄົນ ທີ່ຮັບເງິນເດືອນປະຈຳນຳບໍລິສັດ ແລະ ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງມາດຕານີ້;

4. ມີຊື່ສຽງດີໃນການດຳເນີນງານ ແລະ ໃຫ້ບໍລິການດ້ານການບັນຊີ-ກວດສອບ, ໄດ້ຮັບອະນຸຍາດຈາກກະຊວງການເງິນ, ຈົດທະບຽນນຳສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ ແລະ ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງ ຕາມລະບຽບກົດໝາຍ;
5. ມີເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບຈາກຜູ້ກວດສອບເອກະລາດ ຢ່າງໜ້ອຍສາມ (3) ປີ ກ່ອນມື້ຍື່ນສະໝັກ;
6. ມີລູກຄ້າ (ເປົ້າໝາຍຖືກກວດສອບ) ຢ່າງໜ້ອຍ ສາມສິບ (30) ຫົວໜ່ວຍຕໍ່ປີ ໃນນັ້ນ ຫ້າສິບສ່ວນຮ້ອຍ (50%) ແມ່ນໃຫ້ບໍລິການດ້ານການກວດສອບ;
7. ຍື່ນສຳນວນຄຳຮ້ອງຕໍ່ສຳນັກງານ ຄລຕ ເພື່ອຂໍການຮັບຮອງ.

**ມາດຕາ 18. ເງື່ອນໄຂການຮັບຮອງຜູ້ກວດສອບ**

ຜູ້ກວດສອບ ທີ່ຖືກຮັບຮອງ ໂດຍສຳນັກງານ ຄລຕ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຈົດທະບຽນເປັນສະມາຊິກ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ (LAAIA);
2. ມີປະສົບການດ້ານການກວດສອບ ຢ່າງໜ້ອຍ (3) ສາມປີ;
3. ບໍ່ເຄີຍລະເມີດກົດຈັນຍາບັນທາງດ້ານວິຊາຊີບ;
4. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;
5. ຕ້ອງສັງກັດຢູ່ບໍລິສັດກວດສອບ ທີ່ສະເໜີຂໍການຮັບຮອງຈາກ ສຳນັກງານ ຄລຕ;
6. ຍື່ນສຳນວນຄຳຮ້ອງຕໍ່ສຳນັກງານ ຄລຕ ເພື່ອຂໍການຮັບຮອງ.

**ມາດຕາ 19. ສຳນວນຄຳຮ້ອງ**

ສຳນວນຄຳຮ້ອງ ຂອງບໍລິສັດບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ ແລະ ບໍລິສັດກວດສອບ ປະກອບດ້ວຍເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມທີ່ສຳນັກງານ ຄລຕ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດຄັ້ງທຳອິດ ແລະ ຄັ້ງສຸດທ້າຍ;
3. ໂຄງຮ່າງການຈັດຕັ້ງ ແລະ ກົດລະບຽບພາຍໃນຂອງບໍລິສັດ;
4. ສຳເນົາໃບຢັ້ງຢືນການຈົດທະບຽນເປັນສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ ແລະໄດ້ຮັບອະນຸຍາດຈາກກະຊວງການເງິນ;
5. ບົດລາຍງານການດຳເນີນງານ ແລະ ເອກະສານລາຍງານການເງິນທີ່ໄດ້ຮັບການກວດສອບ ສາມ (3) ປີສຸດທ້າຍ ກ່ອນການຍື່ນສຳນວນຄຳຮ້ອງ;
6. ລາຍຊື່ລູກຄ້າທີ່ໄດ້ຖືກກວດສອບ ສອງ (2) ປີ ກ່ອນການຍື່ນສຳນວນຄຳຮ້ອງ;
7. ໃບລາຍງານກ່ຽວກັບການປ່ຽນແປງທີ່ມີສາລະສຳຄັນທີ່ມີຜົນກະທົບຕໍ່ການດຳເນີນງານ ແລະ ຜົນການປະກອບການ;

8. ໃບລາຍງານກ່ຽວກັບການປ່ຽນແປງທີ່ສຳຄັນກ່ຽວຂ້ອງກັບຜູ້ກວດສອບ ຍ້ອນການເພີ່ມ ຫຼື ຫຼຸດລົງໃນຈຳນວນຜູ້ກວດສອບ, ການລະເມີດຂໍ້ກຳນົດ ແລະ ລະເມີດກົດຈັນຍາບັນທາງດ້ານວິຊາຊີບ;
9. ຈຳນວນ ແລະ ລາຍຊື່ຜູ້ກວດສອບ ພ້ອມດ້ວຍປະຫວັດຫຍໍ້ ແລະ ປະສົບປະການດ້ານການກວດສອບຂອງຜູ້ກວດສອບ ທີ່ຈະດຳເນີນການກວດສອບທາງດ້ານທຸລະກິດຫຼັກຊັບ. ນອກນັ້ນ ຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:
   - ສຳເນົາໃບຢັ້ງຢືນທີ່ປຶກສາບັນຊີ (CPA) ຂອງຜູ້ກວດສອບ;
   - ສຳເນົາປະກາດສະນີຍະບັດການເປັນສະມະຊິກ ທີ່ອອກໂດຍສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ (LAAIA) ຂອງຜູ້ກວດສອບ;
   - ໃບແຈ້ງໂທດ.
10. ເອກະສານອື່ນໆ ຕາມການກຳນົດຂອງ ສຳນັກງານ ຄລຕ.

**ມາດຕາ 20. ການພິຈາລະນາ ການຮັບຮອງເຫັນດີ**

ສຳນັກງານ ຄລຕ ຈະອອກໃບຮັບຮອງ ຫຼື ແຈ້ງຜົນການບໍ່ຮັບຮອງໃຫ້ບໍລິສັດກວດສອບ ແລະ ຜູ້ກວດສອບ ພາຍໃນສາມສິບ (30) ວັນ ນັບແຕ່ວັນທີ່ ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

**ມາດຕາ 21. ການໂຈະການຮັບຮອງເຫັນດີ**

ສຳນັກງານ ຄລຕ ສາມາດສັ່ງໂຈະການຮັບຮອງ ຂອງບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ໃນກໍລະນີ ດັ່ງນີ້:

1. ບໍ່ມີເງື່ອນໄຂຄົບຖ້ວນຕາມທີ່ລະບຸໄວ້ໃນມາດຕາ 17 ແລະ 18 ຂອງຂໍ້ຕົກລົງສະບັບນີ້;
2. ສຳນັກງານ ຄລຕ ກວດພົບຂໍ້ມູນໃນສຳນວນຄຳຮ້ອງ ແລະ ເອກະສານປະກອບບໍ່ຖືກຕ້ອງຕາມຄວາມຈິງ;
3. ບໍ່ເປັນເອກະລາດໃນການກວດສອບ;
4. ບໍ່ສາມາດປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້;
5. ຖືກຟ້ອງຮ້ອງ ຫຼື ຖືກດຳເນີນຄະດີກ່ຽວກັບການກວດສອບ;
6. ເຄີຍລະເມີດ ລະບຽບກົດໝາຍທີ່ກ່ຽວຂ້ອງເປັນອາຈິນ ກ່ຽວກັບວຽກງານການກວດສອບ;
7. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງຖືກສັ່ງໂຈະ ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບຕ້ອງປັບປຸງ ແກ້ໄຂຂໍ້ຜິດ ພາດໃຫ້ສຳເລັດ ຕາມກຳນົດເວລາ ທີ່ສຳນັກງານ ຄລຕ ກຳນົດ.

**ມາດຕາ 22. ການຍົກເລີກການຮັບຮອງ**

ສຳນັກງານ ຄລຕ ສາມາດຍົກເລີກການຮັບຮອງ ຂອງບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ໃນກໍລະນີ ດັ່ງນີ້:

1. ໃບຍັ້ງຢືນການຈົດທະບຽນທຸລະກິດ ຫຼື ການຈົດທະບຽນສະມາຊິກກັບສະມາຄົມວິຊາຊີບນັກບັນຊີ ແລະ ກວດສອບອິດສະລະລາວ ຫຼື ການອະນຸມັດຂອງກະຊວງການເງິນໄດ້ຖືກລົບລ້າງ;
2. ບໍ່ສາມາດແກ້ໄຂຂໍ້ຜິດພາດ ຕາມກຳນົດເວລາ ທີ່ ສຳນັກງານ ຄລຕ ກຳນົດໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;
3. ລະເມີດກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍການກວດສອບ, ດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 23. ອາຍຸຂອງການຮັບຮອງ**

ອາຍຸຂອງການຮັບຮອງ ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ໄດ້ຖືກຮັບຮອງ ຈາກສຳນັກງານ ຄລຕ ແມ່ນສາມ (3) ປີ. ບໍລິສັດກວດສອບ ແລະ ຜູ້ກວດສອບທີ່ມີຈຸດປະສົງຕໍ່ອາຍຸຂອງການຮັບຮອງ ຕ້ອງຍື່ນສຳນວນຄຳຮ້ອງ ຕໍ່ສຳນັກງານ ຄລຕ ພາຍໃນກຳ ນົດເວລາສີ່ສິບຫ້າ (45) ວັນ ກ່ອນວັນໝົດອາຍຸ.

**ມາດຕາ 24. ສິດຂອງບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງ**

ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງ ມີສິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍວ່າດ້ວຍການກວດສອບ ແລະ ມີສິດເພີ່ມເຕີມ ດັ່ງນີ້:

1. ກວດສອບ, ສຳເນົາເອກະສານ ຫຼື ສະເໜີຂໍໃຫ້ສົ່ງຂໍ້ມູນທາງບັນຊີ ແລະ ເອກະສານອື່ນໆຂອງກຸ່ມເປົ້າໝາຍ ແລະ ຂອງບໍລິສັດທີ່ມີຄວາມກ່ຽວຂ້ອງກັບກຸ່ມເປົ້າໝາຍ ໂດຍສະເພາະຖານະການເງິນ ເພື່ອປະເມີນການປະຕິບັດໜ້າທີ່;
2. ກໍລະນີຈຳເປັນ ມີສິດສະເໜີໃຫ້ໜ່ວຍງານກວດກາພາຍໃນຂອງກຸ່ມເປົ້າໝາຍ ແລະ ຂອງບໍລິສັດທີ່ມີຄວາມກ່ຽວຂ້ອງກັບກຸ່ມເປົ້າໝາຍ ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນທີ່ຕິດພັນກັບການກວດສອບ. ໜ່ວຍງານກວດກາພາຍໃນ ຂອງກຸ່ມເປົ້າໝາຍ ຫຼື ແລະ ຂອງບໍລິສັດທີ່ມີຄວາມກ່ຽວຂ້ອງກັບກຸ່ມເປົ້າໝາຍ ຕ້ອງປະຕິບັດຕາມການສະເໜີດັ່ງກ່າວໂດຍທັນທີ;
3. ກໍລະນີ ຜູ້ກວດສອບເຫັນວ່າການກວດສອບບໍ່ເປັນເອກະລາດຕາມມາດຕະຖານການກວດສອບບັນຊີ ມີສິດຍົກເລີກສັນຍາການກວດສອບ ບົນພື້ນຖານການເຫັນດີຂອງສຳນັກງານ ຄລຕ;
4. ຍົກເລີກສັນຍາການກວດສອບ ກໍລະນີ ຜູ້ກວດສອບຖືກນາບຂູ່ໃຫ້ດຳເນີນການໃດໜຶ່ງທີ່ບໍ່ສອດຄ່ອງກັບລະບຽບກົດໝາຍໂດຍບໍລິສັດອອກຫຼັກຊັບ ແລະ ຕ້ອງລາຍງານໃຫ້ ສຳນັກງານ ຄລຕ.

**ມາດຕາ 25. ໜ້າທີ່ຂອງບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງ**

ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງ ມີໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍວ່າດ້ວຍການກວດສອບ ແລະ ມີໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ອະທິບາຍ ຫຼື ສະໜອງຂໍ້ມູນຂ່າວສານ ກ່ຽວກັບການກວດສອບ ໃຫ້ສຳນັກງານ ຄລຕ;
2. ໃນການດຳເນີນການກວດສອບ, ກໍລະນີບໍລິສັດກວດສອບ ແລະ ຜູ້ກວດສອບເຫັນວ່າກຸ່ມເປົ້າໝາຍທີ່ຕົນກວດສອບນັ້ນ ລະເມີດລະບຽບກົດໝາຍ ຊຶ່ງອາດ ມີຜົນກະທົບຢ່າງເປັນສາລະສຳຄັນ ຕ້ອງແຈ້ງໃຫ້ຄະນະບໍລິຫານຂອງກຸ່ມເປົ້າໝາຍ ເພື່ອຫາມາດຕະການປ້ອງກັນ, ແກ້ໄຂ ແລະ ຄວບຄຸມການກະທຳຜິດ ພ້ອມທັງລະບຸຂໍ້ຜິດພາດດັ່ງກ່າວ ໃນບົດລາຍງານການກວດສອບ ແລະ ບົດລາຍງານເຖິງຄະນະຜູ້ບໍລິຫານ;
3. ຕ້ອງລາຍງານສິ່ງທີ່ກວດພົບ ໃຫ້ສຳນັກງານ ຄລຕ ດັ່ງນີ້:
   - 3.1 ການສໍ້ໂກງ ແລະ ຂໍ້ຜິດພາດຢ່າງເປັນສາລະສຳຄັນທີ່ກະທົບຕໍ່ການຕັດສິນໃຈຂອງນັກລົງທຶນໃນຫຼັກຊັບ ແລະ ຜູ້ທີ່ກ່ຽວຂ້ອງ;
   - 3.2 ຄວາມເສຍຫາຍ ຫຼື ຄວາມເສຍຫາຍທີ່ອາດຈະເກີດຂື້ນ ທີ່ມີມູນຄ່າແຕ່ສິບສ່ວນຮ້ອຍ (10%) ຂອງມູນຄ່າຊັບສິນຂອງບໍລິສັດອອກຫຼັກຊັບ;
   - 3.3 ການປ່ຽນແປງຂອງຊັບສິນ ຫາກເຫັນວ່າຜິດປົກະຕິ;
   - 3.4 ມູນຄ່າຊັບສິນຂອງບໍລິສັດອອກຫຼັກຊັບບໍ່ພໍທີ່ຈະຮັບປະກັນຈຳນວນຮ້ອງຟ້ອງຂອງເຈົ້າໜີ້.
4. ກໍລະນີ ບໍລິສັດກວດສອບ ແລະ ຜູ້ກວດສອບ ຖືກຍົກເລີກ ຫຼື ສິ້ນສຸດການໃຫ້ບໍລິການດ້ານການບັນຊີ ແລະ ກວດສອບໃນຂະແໜງຫຼັກຊັບ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ສຳນັກງານ ຄລຕ ພາຍໃນເຈັດ (7) ວັນລັດຖະການ;
5. ໃນສັນຍາລະຫວ່າງ ບໍລິສັດກວດສອບ ແລະ ກຸ່ມເປົ້າໝາຍ ຕ້ອງກຳນົດສິດຂອງບໍລິສັດກວດສອບ ຫຼື ຜູ້ກວດສອບ ໃນການເປີດເຜີຍຂໍ້ມູນ ແລະ ສົ່ງບົດລາຍງານການກວດສອບໃຫ້ສຳນັກງານ ຄລຕ;
6. ບໍລິສັດກວດສອບ ຕ້ອງດຳເນີນທົບທວນ ແລະ ກວດສອບ ບາງລາຍການ ທີ່ໜ້າສົງໃສຕາມການຮຽກຮ້ອງຂອງສຳນັກງານ ຄລຕ;
7. ກໍລະນີ ສຳນັກງານ ຄລຕ ກວດພົບ ບໍລິສັດກວດສອບ ສ້າງບົດລາຍງານ ກວດສອບບໍ່ຈະແຈ້ງ ແລະ ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງອາດເຮັດໃຫ້ເກີດຄວາມເສຍຫາຍແກ່ບໍລິສັດທີ່ຖືກກວດສອບ ແລະ ຜູ້ນຳໃຊ້ ບົດລາຍງານກວດສອບນັ້ນ ບໍລິສັດກວດສອບຕ້ອງຊົດເຊີຍຄ່າເສຍຫາຍຕາມລະບຽບການທີ່ກ່ຽວຂ້ອງ;
8. ບໍລິສັດກວດສອບ ຕ້ອງສົ່ງບົດລາຍງານການດຳເນີນທຸລະກິດປະຈຳໄຕມາດ ພາຍໃນໜຶ່ງ (1) ເດືອນຫຼັງຈາກສິ້ນສຸດໄຕມາດ ແລະ ບົດລາຍງານການດຳເນີນທຸລະກິດ ປະຈຳປີພາຍ ໃນສາມ (3) ເດືອນຫຼັງຈາກສິ້ນສຸດປີການບັນຊີ ໃຫ້ສຳນັກງານ ຄລຕ;

9. ບົດລາຍງານການດຳເນີນທຸລະກິດ ຕ້ອງປະກອບມີເນື້ອໃນກ່ຽວກັບປະເພດທຸລະກິດ, ລາຍລະອຽດກ່ຽວກັບທຸລະກິດ, ຖານະການເງິນ ແລະ ລາຍລະອຽດອື່ນໆຂອງຜູ້ກວດສອບ;
10. ຫ້າມເລືອກ ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ບໍ່ໄດ້ຖືກຮັບຮອງເອົາໂດຍ ສຳນັກງານ ຄລຕ;
11. ອື່ນໆ ຕາມການກຳນົດ ຂອງ ສຳນັກງານ ຄລຕ.

**ມາດຕາ 26. ຄ່າທຳນຽມ**

ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ຕ້ອງເສຍຄ່າທຳນຽມໃຫ້ ສຳນັກງານ ຄລຕ ຢ່າງຄົບຖ້ວນ ດັ່ງນີ້:

1. ຄ່າທຳນຽມໃນການສະເໜີ ແລະ ພິຈາລະນາສຳນວນຄຳຮ້ອງເປັນບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບທີ່ຖືກຮັບຮອງ ຈຳນວນຫ້າ (5) ລ້ານກີບ ແລະ ສອງ (2) ລ້ານ ກີບຕາມລຳດັບ ແລະ ຕ້ອງຊຳລະໃນວັນທີ່ຍື່ນສຳນວນຄຳຮ້ອງ;
2. ຄ່າທຳນຽມໃນການຕໍ່ອາຍຸ ການຮັບຮອງເປັນບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ຈຳນວນສອງ (2) ລ້ານກີບ ແລະ ໜຶ່ງ (1) ລ້ານກີບຕາມລຳດັບ ແລະ ຕ້ອງຊຳລະໃນວັນທີ່ຍື່ນສຳນວນຄຳຮ້ອງ;
3. ຄ່າທຳນຽມປະຈຳປີ ສຳລັບບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ຖືກຮັບຮອງ ຈຳນວນສິບ (10) ລ້ານກີບ ແລະ ສອງ (2) ລ້ານກີບຕາມລຳດັບ ແລະ ຕ້ອງຊຳລະ ພາຍໃນ ວັນທີ 15 ມັງກອນ ຂອງປີການບັນຊີນັ້ນ.

## ໝວດທີ V
## ການຄຸ້ມຄອງ ແລະ ກວດກາໂດຍ ສຳນັກງານ ຄລຕ

**ມາດຕາ 27. ການຄຸ້ມຄອງ ແລະ ກວດກາໂດຍ ສຳນັກງານ ຄລຕ**

ສຳນັກງານ ຄລຕ ສາມາດຕິດຕາມກວດກາບົດລາຍງານການກວດສອບເພື່ອໃຫ້ໝັ້ນໃຈວ່າການກວດສອບຖືກຕ້ອງ ແລະ ຍຸຕິທຳໃນການປະຕິບັດໜ້າທີ່.

ສຳນັກງານ ຄລຕ ສາມາດສະເໜີຂໍໃຫ້ກຸ່ມເປົ້າໝາຍ ຫຼື ບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ, ບໍລິສັດທີ່ໃຫ້ການປຶກສາດ້ານການບັນຊີ, ບໍລິສັດກວດສອບ ແລະ ຜູ້ກວດສອບ ສົ່ງຂໍ້ມູນການສະແດງຄຳເຫັນ, ບົດລາຍງານ ຫຼື ກວດກາປຶ້ມບັນທຶກບັນຊີ ແລະ ເອກະສານຕ່າງໆ, ກວດສອບຖານະທາງທຸລະກິດ ແລະ ຖານະທາງການເງິນຂອງກຸ່ມເປົ້າໝາຍ ຫຼື ຂອງບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ.

ພະນັກງານຂອງ ສຳນັກງານ ຄລຕ ທີ່ຈະດຳເນີນການກວດກາປຶ້ມບັນທຶກບັນຊີ ແລະ ເອກະສານຂອງກຸ່ມເປົ້າໝາຍ ຫຼື ກວດສອບຖານະທາງທຸລະກິດ ແລະ ຖານະທາງການເງິນຕາມວັກ 2 ຂອງມາດຕານີ້ ຕ້ອງສະແດງໃບຢັ້ງຢືນສິດຂອງຕົນ ເພື່ອດຳເນີນການດັ່ງກ່າວ.

**ມາດຕາ 28. ການປະສານສົມທົບ**

ສຳນັກງານ ຄລຕ ຕ້ອງເປັນເຈົ້າການປະສານສົມທົບກັບ ສະພາບັນຊີ, ສະມາຄົມວິຊາຊີບນັກບັນຊີ ແລະ ຜູ້ກວດສອບອິດສະລະລາວ "LAAIA", ກົມບັນຊີ ກະຊວງການເງິນແລະພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາການເຄື່ອນໄຫວ ເມື່ອມີບັນຫາເກີດຂຶ້ນຕ້ອງໄດ້ຮ່ວມກັນຫາວິທີແກ້ໄຂ ຕາມລະບຽບກົດໝາຍ.

## ພາກທີ VI
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29. ຂໍ້ຫ້າມ**

ຫ້າມບໍລິສັດກວດສອບ ຄັດເລືອກ ແລະ ແຕ່ງຕັ້ງຜູ້ກວດສອບ ເຂົ້າໃນຄະນະກວດສອບກຸ່ມເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 64 ຂອງກົດໝາຍວ່າດ້ວຍການກວດສອບ ແລະ ຜູ້ກວດສອບທີ່ມີຄວາມສຳພັນອື່ນໆ ທີ່ສຳນັກງານ ຄລຕ ເຫັນວ່າເປັນການຂັດແຍ້ງທາງດ້ານຜົນປະໂຫຍດກັບກຸ່ມເປົ້າໝາຍ.

ຫ້າມບໍລິສັດກວດສອບ ແລະ ຜູ້ກວດສອບ ໃຫ້ການບໍລິການດັ່ງຕໍ່ໄປນີ້ ແກ່ກຸ່ມເປົ້າໝາຍ:

1. ການບໍລິການທາງດ້ານການບັນຊີ ລວມທັງການສ້າງເອກະສານລາຍງານການເງິນ;
2. ການອອກແບບ ແລະ ການປະຕິບັດງານຂອງລະບົບຂໍ້ມູນທາງການເງິນ;
3. ການປະເມີນ-ຕີມູນຄ່າ ຊັບສິນ, ໜີ້ສິນ ແລະ ທຶນ;
4. ການບໍລິການກ່ຽວກັບການຄຳນວນຄ່າສະເພາະທາງສະຖິຕິ;
5. ການກວດກາພາຍໃນ;
6. ໃຫ້ຄຳປຶກສາດ້ານການບໍລິຫານ, ການດຳເນີນງານ ແລະ ບຸກຄະລາກອນ;
7. ເປັນນາຍໜ້າ, ທີ່ປຶກສາດ້ານການລົງທຶນ ຫຼື ການບໍລິການວິເຄາະດ້ານການລົງທຶນ;
8. ການບໍລິການດ້ານກົດໝາຍ ຫຼື ເປັນທີ່ປຶກສາດ້ານກົດໝາຍ;
9. ການບໍລິການອື່ນໆ ທີ່ທາງສຳນັກງານ ຄລຕ ເຫັນວ່າມີຂໍ້ຂັດແຍ້ງກັນດ້ານຜົນປະໂຫຍດ.

**ມາດຕາ 30. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບການສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງດ້ານການບັນຊີ ແລະ ການກວດສອບໃນຂົງເຂດວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີທີ່ລະເມີດເປັນຄັ້ງທຳອິດ ແລະ ມີລັກສະນະເບົາບາງ ຈະຖືກກ່າວເຕືອນເປັນລາຍລັກອັກສອນ ຈາກສຳນັກງານ ຄລຕ;
2. ພາຍຫຼັງທີ່ຖືກກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ບໍລິສັດກວດສອບ ແລະ ຜູ້ກວດສອບບັນຊີ ບໍ່ສາມາດສະແດງຄຳເຫັນ ແລະ ລົງລາຍເຊັນໃສ່ບົດລາຍງານການກວດສອບເປັນເວລາ ສອງ (2) ປີ ຫຼື ເປັນການລະເມີດຄັ້ງ ທຳອິດທີ່ມີລັກສະນະຮ້າຍແຮງ ຈະຖືກຍົກເລີກການຮັບຮອງຈາກສຳນັກງານ ຄລຕ. ຜູ້ລະເມີດຈະຖືກປັບໃໝ ຕາມລະບຽບການທີ່ສຳນັກງານ ຄລຕ ວາງອອກ;
3. ຖ້າວ່າການລະເມີດດັ່ງກ່າວເປັນການກະທຳຜິດກົດໝາຍ ຜູ້ລະເມີດຈະຖືກດຳເນີນຄະດີຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 32. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ ແລະ ພາກສ່ວນອື່ນໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 33. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ